ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ກະຊວງກະສິກຳ ແລະ ປ່າໄມ**

**ໂຄງການພັດທະນາຊົນນະບົດຮອບດ້ານ ຮ່ວມມື ລາວ-ຝຣັ່ງເສດ (PCADR)**

ຈຸດປະຕິບັດງານ ເຂດພູພຽງບໍລະເວນ (PAB)

---

# ການສະໜັບສະໜຸນດ້ານວິທີການແກ່ “ຄະນະເຮັດວຽກກ່ຽວກັບຕ່ອງໂສ້ກາເຟ”

# ຂໍ້ສະເໜີສຳລັບ ການຮ່ວມມືວິເຄາະ ຕ່ອງໂສ້ການສະໜອງກາເຟລາວ

---

ເດນິສ ໂຊຕີເອ–ຊີຣາດ (CIRAD)

2007

# ສາລະບານ

ໜ້າ

ບົດຄັດຫຍໍ້ .......... 2
1 - ເນື້ອໃນ ແລະ ໜ້າທີ່ຂອງການປະຕິບັດວຽກງານ .......... 4
2 - ທິດທາງ ຂອງການສະໜອງແບບເປັນຕ່ອງໂສ້ .......... 7
3 - ຮ່າງສະເໜີກ່ຽວກັບ ແຜນກິດຈະກຳ ສຳລັບ 2007 .......... 8
4 - ສະຫລຸບສັງລວມ .......... 18
ເອກະສານອ້າງອີງ .......... 19
ເອກະສານຊ້ອນທ້າຍ .......... 20
ເອກະສານຊ້ອນທ້າຍ 1: ພາລະບົດບາດຂອງການປະຕິບັດງານ .......... 21
ເອກະສານຊ້ອນທ້າຍ 2: **GTC -** ກຸ່ມວິຊາການກາເຟ ຄະນະກຳມະການ ທີ **2** .......... 23
ເອກະສານຊ້ອນທ້າຍ 3: ຕາຕະລາງການປະຕິບັດວຽກຂອງທີມງານ .......... 24
ເອກະສານຊ້ອນທ້າຍ 4: *ກອງປະຊຸມກຸ່ມວິຊາການກາເຟຄັ້ງທີ* 2 .......... 25
ເອກະສານຊ້ອນທ້າຍ 5: ບົດສະເໜີໃນກອງປະຊຸມຄັ້ງທີ 2 ຂອງກຸ່ມວິຊາການກາເຟ .......... 27

# ບົດຄັດຫຍໍ້

ບົດລາຍງານນີ້ໄດ້ສັງລວມເອົາຜົນຂອງການມາປະຕິບັດວຽກງານໃນເດືອນມັງກອນ, ປີ 2007 ໃນການເຮັດວຽກກັບກຸ່ມວິຊາການ ທີ່ສະນັບສະໜູນ «ຄະນະເຮັດວຽກກ່ຽວກັບໂສ້ສະໜອງກາເຟລາວ ຫລື – GTC), ເພື່ອສະເໜີວິທີການໃນການປະສານງານ ສຳລັບການຮ່ວມມືໃນການສຶກສາ ກ່ຽວກັບຕ່ອງໂສ້ການສະໜອງກາເຟ. GTC ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2006 ໂດຍກະຊວງກະສິກຳ ແລະ ປ່າໄມ້ ທີ່ປະກອບມີສະມາຊິກ ຈາກຜູ້ປູກດ ຜູ້ແປຮູບ, ພໍ່ຄ້າ ແລະ ຜູ້ຕາງໜ້າຈາກຝ່າຍລັດຖະບານ ທີ່ມີຈຸດປະສົງ ແລະ ເປົ້າໝາຍ ໃນການສ້າງຈຸດມຸ້ງໝາຍຮ່ວມກັນໃນສະພາບການ ແລະ ສິ່ງທີ່ທ້າທ້າຍໃນຕ່ອງໂສ້ການສະໜອງກາເຟຂອງລາວ.

ການເຮັດວຽກຄັ້ງນີ້ແມ່ນໄດ້ສຸມໃສ່ ຄຳນິຍາມຂອງແນວທາງໃນການຮ່ວມມື ແລະ ແຜນກິດຈະກຳລະອຽດສຳລັບການສຶກສາວິໃຈການຮ່ວມມືໃນຕ່ອງໂສ້ການສະໜອງກາເຟ. ຂໍ້ສະເໜີໄດ້ມີການຄົ້ນຄ້ວາມຢ່າງລະອຽດຖີ່ຖ້ວນ ຂອງຄະນະກຸ່ມວິຊາການ. ຂໍ້ສະເໜີດັ່ງກ່າວນີ້ໄດ້ນຳສະເໜີໃນກອງປະຊຸມຄະນະກຸ່ມວິຊາການ ໃນວັນທີ 19 ມັງກອນ 2007 ໂດຍການເປັນປະທານ ຂອງທ່ານລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້.



**ຄຳສັບທີ່ສຳຄັນ:** ການສຶກສາກ່ຽວກັບຕ່ອງໂສ້ການສະໜອງ; ກາເຟ ; ປະເທດລາວ.

# ບັນດາຄຳຫຍໍ້

| | |
|---|---|
| GTC | ຄະນະເຮັດວຽກກ່ຽວກັບຕ່ອງໂສ້ການສະໜອງກາເຟ |
| MAF | ກະຊວງກະສິກຳ ແລະ ປ່າໄມ້ |
| PAB | ຈຸດປະຕິບັດງານພູພຽງບໍລະເວນ |
| PAFO | ພະແນກກະສິກຳ ແລະ ປ່າໄມ້ແຂວງ |
| PCADR | ໂຄງການພັດທະນາຊົນນະບົດຮອບດ້ານ ຮ່ວມມື ລາວ-ຝຣັ່ງເສດ |
| PDR | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| LCG | ກຸ່ມບໍລິສັດທີ່ປຶກສາລາວ |
| STEA | ອົງການວິທະຍາສາດເຕັກໂນໂລຊີ ແລະ ສິ່ງແວດລ້ອມ |
| WTO | ອົງການການຄ້າໂລກ |

## 1 - ເນື້ອໃນ ແລະ ຫນ້າທີ່ຂອງການປະຕິບັດວຽກງານ

<u>ເນື້ອໃນ</u>

ກາເຟແມ່ນຜະລິດຕະພັນກະສິກຳທີ່ສົ່ງອອກອັນດັບສອງ ໃນ ສ ປປ ລາວ ຊຶ່ງກວມເອົາ 7,3% ຂອງປະລິມານທັງຫມົດຂອງຜະລິດຕະພັນກະສິກຳ ທີ່ສົ່ງອອກໃນ ປີ 2003 (PCADR, 2005). ໃນປີ 2004, ສປປ ລາວໄດ້ສົ່ງອອກ ໂຣບຸສະຕາ 20 405 ໂຕນ ແລະ 2096 ໂຕນ ອາຣາບິກກາ. ໄດ້ມີການປັບປຸງຢ່າງໃຫຍ່ຫລວງ ໃນຕ່ອງໂສ້ການສະຫນອງກາເຟ ໃນຫລາຍປີມານີ້ ເຊັ່ນການເພີ້ມການຜະລິດອາຣາບິກກາ, ການແຜ່ກະຈາຍການຜະລິດແບບປຽກ, ການແປຮູບ ແລະ ການຕະຫລາດກ່ຽວກັບກາເຟທີ່ລະລາຍໄດ້ເພີ້ມຂຶ້ນ ແລະ ອື່ນໆ.

ເຖິງຢ່າງໃດກໍດີ ກໍຍັງພົບຫລາຍບັນຫາ. ລາຄາດ້ານລົບທີ່ແຕກຕ່າງກັນແມ່ນມີຜົນກະທົບຕໍ່ການສົ່ງອອກຂອງກາເຟ ໂຣບຸດສະຕາ ລາວ, ຍັງບໍ່ທັນມີມາດຕະຖານແຫ່ງຊາດ ຫລື ບໍ່ມີພື້ນຖານທາງດ້ານຄຸນນະພາບໃນການ ຈ່າຍໃຍຕ່ອງໂສ້ການຜະລິດກາເຟນີ້ ຍົກຕົວຢ່າງ ເຫດການປະຈຸບັນ ທີ່ມີຜົນສະທ້ອນຂອງການແຂ່ງຂັນ ແລະ ຄວາມຍືນຍົງ ຂອງຊີວິດທີ່ອີງໃສ່ກາເຟ ແລະ ທຸລະກິດໃນ ສປປ ລາວ ແລະ ສາມາດຊີ້ແກ້ໄຂໄດ້ໃນການຮ່ວມມືກັນ. ເຖິງຢ່າງໃດກໍຕາມ ມາຮອດປະຈຸບັນນີ້ ຂະແຫນງການກາເຟຂອງ ສປປ ລາວຍັງບໍ່ທັນໄດ້ຮວມກັນ ກັບອົງການປະສານງານທີ່ປະກອບມີບັນດາຜູ້ຕາງຫນ້າຈາກຫລາຍພາກສ່ວນໃນຕ່ອງໂສ້ ແລະ ສາມາດກຳນົດທິດທາງເປົ້າຫມາຍຂອງຂະແຫນງການ ແລະ ເພື່ອສະແດງການຊ່ວຍເຫລືອໃນການຈັດຕັ້ງປະຕິບັດນະໂຍບາຍທີ່ໄດ້ວາງອອກ.

ໃນເມື່ອບໍ່ມີອົງການຈັດຕັ້ງໃນຕ່ອງໂສ້ການຜະລິດກາເຟໃນປະຈຸບັນ, ຄະນະເຮັດວຽກກ່ຽວກັບຕ່ອງໂສ້ການສະໜອງກາເຟ (Groupe de Travail Café - GTC) ໄດ້ສ້າງຕັ້ງຂຶ້ນໃນປີ 20006 ຊຶ່ງມີ 2 ຈຸດປະສົງຄື:

1. ເພື່ອຮ່າງຂໍ້ສະເຫນີຕໍ່ລັດຖະບານໃນການຈັດຕັ້ງອົງກອນປະສານງານ ສຳລັບການເຟ (ເຊັ່ນ: " ສະມາຄົມກາເຟແຫ່ງຊາດ" : ທີ່ປະກອບມີ: ອົງປະກອບ, ລະບຽບ, ອຳນາດ ແລະ ທຶນ ແລະ ອື່ນໆ
2. ເພື່ອຈັດຕັງປະຕິບັດການວິເຄາະຮ່ວມກັນກ່ຽວກັບຕ່ອງໂສ້ການສະຫນອງ ທີ່ໃຫ້ການປະກອບສ່ວນໃຫ້ແກ່ຍຸດທະສາດຂອງອົງການປະສານງານ ຂອງຕ່ອງໂສ້ກາເຟໃນພາຍຫນ້າ.

ອົງປະກອບຂອງຄະນະເຮັດວຽກກ່ຽວກັບຕ່ອງໂສ້ການສະໜອງກາເຟ GTC ຊຶ່ງມີລາຍລະອຽດໃນເອກກະສານຊ້ອນທ້າຍ ທີ 3 ທີ່ໄດ້ແບ່ງອອກມີ 2 ຄະນະ(ແຕ່ລະຄະນະສຳລັບແຕ່ລະຈຸດປະສົງ). GTC ບໍ່ແມ່ນຜູ້ຕາງຫນ້າ ມັນເປັນພຽງແຕ່ກຸ່ມວິຊາການຊົ່ວຄາວ ທີ່ປະຕິບັດກິດຈະກຳຕາມເວລາ ທີ່ໄດ້ສົ່ງຜົນຂອງຂໍ້ສະເຫນີສອງອັນນັ້ນ. ກອງເລຂາ GTC ໄດ້ມີການຮັບປະກັນໂດຍຫ້ອງການປະສານງານຂັ້ນສູນກາງ ຂອງໂຄງການນະໂຍບາຍພັດທະນາຊົນນະບົດ(PCADR).

ໜ້າທີ່ທີ່ໄດ້ກຳນົດ

ຈຸດປະສົງຂອງການປະຕິບັດງານນີ້ແມ່ນເພື່ອເຮັດວຽກກັບກຸ່ມວິຊາການ ສຳລັບຄະນະກຳມະການທັງສອງຄະນະຂອງ GTC, ທີ່ກ່ຽວຂ້ອງກັບການສຶກສາຮ່ວມກ່ຽວກັບຕ່ອງໂສ້ການສະໜອງກາເຟ ແລະ ສະເໜີວິທີການ ແລະ ທິດທາງສະເພາະໃນແຕ່ລະຂັ້ນ ເພື່ອປະຕິບັດການຮັບໂຮມຂໍ້ມູນ ແລະ ເຮັດການວິເຄາະ. ລາຍລະອຽດກ່ຽວກັບໜ້າວຽກທີ່ຕ້ອງປະຕິບັດໃນຄັ້ງນີ້ ແມ່ນຢູ່ໃນເອກກະສານຊ້ອນທ້າຍ 1 ທີ່ໄດ້ສຸມໃສ່ ພຽງແຕ່ 2 ເປົ້າໝາຍຂອຄະນະເຮັດວຽກກ່ຽວກັບຕ່ອງໂສ້ການສະໜອງກາເຟ GTC ທີ່ກ່າວມາຂ້າງເທິງນີ້.

ໜ້າທີ່ທີ່ໄດ້ກຳນົດໃນການເຮັດວຽກຄັ້ງນີ້ມີ :

1. ເພື່ອທົບທວນຄືນການວິໃຈທີ່ມີແລ້ວສຳລັບຕ່ອງໂສ້ການສະໜອງກາເຟ
2. ເພື່ອກຳນົດຂັ້ນຕອນຈະແຈ້ງໃນການສຶກສາຮ່ວມກັນກ່ຽວກັບຕ່ອງໂສ້ການສະໜອງກາເຟ ກັບກຸ່ມວິຊາການ
3. ເພື່ອສ້າງແຜນປະຕິບັດງານລະອຽດ
4. ເພື່ອສົນທະນາກ່ຽວກັບໜ້າທີ່ຕ່າງໆ
5. ເພື່ອສະເໜີຮ່ວມກັບຜົນການຄົ້ນຄ້ວາ ຂອງກຸ່ມວິຊາການກ່ຽວກັບວຽກງານນີ້ ໃນກອງປະຊຸມຄັ້ງທີ 2 ຂອງ GTC ທີ່ຈະຈັດຂຶ້ນທີ່ນະຄອນຫລວງວຽງຈັນ.

ການເຮັດວຽກຄັ້ງນີ້ແມ່ນໄດ້ປະຕິບັດໃນລະຫວ່າງ ວັນທີ 15-19 ມັງກອນ 2007. ກອງປະຊຸມໄດ້ຈັດຂຶ້ນທີ່ກະຊວງກະສິກຳ ແລະ ປ່າໄມ້ ທີ່ຫ້ອງການປະສານງານລະດັບສູນກາງ ຂອງໂຄງການສະໜັບສະໜູນນະໂຍບາຍໃນການພັດທະນາຊົນນະບົດ (UC-PCADR). ຄະນະເຮັດວຽກກ່ຽວກັບຕ່ອງໂສ້ການສະໜອງກາເຟ GTC ໄດ້ຈັດຂຶ້ນໃນວັນທີ 19 ມັງກອນ ທີ່ໂຮງແຮມເສດຖາປາລັສ ໂດຍການເປັນປະທານຂອງທ່ານ ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້, ທ່ານ ສີຕາເຮງ ລາດຊະພົນ.

ເພື່ອຊຸກຍູ້ຄະນະກຳມະການກຸ່ມວິຊາການ ໃນການກະກຽມ ແລະ ໃນລະຫວ່າງການຈັດຕັ້ງປະຕິບັດ ການກຳນົດກິດຈະກຳ, ມັນຈະຕ້ອງໄດ້ມີທີມນັກວິຊາການ ກ່ອນການປະຕິບັດວຽກ. ຊຶ່ງກຸ່ມວິຊາການດັ່ງກ່າວປະກອບດ້ວຍ:

- ສະມາຊິກ 1 ທ່ານ ຈາກຫ້ອງການປະສານງານສູນກາງ ຂອງ PCADR, ທີ່ມີປະສົບປະການກ່ຽວກັບຕ່ອງໂສ້ການສະໜອງກາເຟໃນລາວ ( ການສຶກສາທີ່ໄດ້ປະສານງານກັບຫ້ອງການປະສານງານທີ່ໄດ້ປະຕິບັດແລ້ວໃນປີ 2005 ຈະໄດ້ນຳມາໃຊ້ເປັນຈຸດເລີ່ມຕົ້ນ ສຳລັບການການວິເຄາະ ຂອງ ຄະນະເຮັດວຽກກ່ຽວກັບຕ່ອງໂສ້ການສະໜອງກາເຟ GTC ): ທ່ານ ສະເຕເວນ ເຊບປະເລ,
- ນັກເສດຖະສາດກະສິກຳ ຈາກມະຫາວິທະຍາໄລແຫ່ງຊາດ(ມະຫາວິທະຍາໄລກະເສດນາບົງ ໄດ້ຈັດຝຶກອົບຮົມ 01 ອາທິດໃນປີ 2005, ກ່ຽວກັບການວິເຄາະຕ່ອງໂສ້ການສະໜອງອາຫານທີ່ມາຈາກກະສິກຳ ທີ່ໄດ້ຈັດທີ່ແຂວງຈຳປາສັກ ແລະ ລົງເລິກສະເພາະຕ່ອງໂສ້ການສະໜອງກາເຟ) : ໂດຍອາຈານ ຈິດປະສົງ ກຸສົນສະຫັວດ, ສາດສະດາຈານ ຈາກກົມເສດຖະກິດຊົນນະບົດ ແລະ ອາຫານ,
- ສະມາຊິກຫ້ອງການປະສານງານໂຄງການສູນກາງ ທີ່ມີຄວາມຊ່ຽວຊານໃນການເກັບກຳຂໍ້ມູນ ແລະ ຈັດການ: ທ່ານ ພຸດທະນູສອນ ເໜືອນສິດທິດາ,
- ຜູ້ຊ່ວຍ ກຸ່ມວິຊາການ, ທ່ານ ນ. ພອນປະເສີດ ມະຫາວົງ,
- ຜູ້ຊ່ວຍທາງດ້ານວິຊາການ ຂອງໂຄງການກາເຟໃນລະດັບໃຫຍ່ຂອງບໍລິເວນ PAB (Point d'Appui des Bolovens): ທ່ານ ແບກຕອງ ຊາເລ.

ນັກວິຊາສະເພາະ ກ່ຽວກັບການວິເຄາະຕ່ອງໂສ້ການສະໜອງກາເຟ ທີ່ ໄດ້ກວມເອົາ ສອງໜ້າທີ່ສະເພາະ ເຊັ່ນ ອັນທີ່ ນຶ່ງແມ່ນ ເລີ້ມຕົ້ນປະຕິບັດໃນການຊ່ວຍ ກຳນົດວິທີການ ແລະ ຫລັງຈາກນັ້ນ ແມ່ນເກັບກຳຂໍ້ມູນໃນການທົດລອງປະຕິບັດ ເພື່ອກຳນົດແລະ ດັດແກ້ ບາງວິທີການທີ່ມີຂໍ້ຫຍຸ້ງຍາກ: ທ່ານ ເດນິສ ຊໍຕິເອ ຈາກ Cirad.

ຫລັງຈາກສຳເລັດການສຶກສາ, ຜົນໄດ້ຮັບ ແລະ ຂໍ້ສະຫລຸບ ຈະໄດ້ສະເໜີໃນກອງປະຊຸມສຳມະນາລະດັບຊາດ ທີ່ຈະຈັດຂື້ນໂດຍກຸ່ມວິຊາການ GTC.

ຫລັງຈາກຈັດກອງປະຊຸມສຳມະນາ, ການຈັດຕັ້ງປະຕິບັດ ບັນດາຂໍ້ແນະນຳ ແລະ ຂໍ້ສະຫລຸບນັ້ນ ຈະໄດ້ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງ ອົງການປະສານງານທີ່ຈະໄດ້ສ້າງຂື້ນໂດຍການປ່ຽນແທນ GTC (ຍົກຕົວຢ່າງ ຄະນະກຳມະການກາເຟແຫ່ງຊາດ).

## 2 - ທິດທາງ ຂອງການສະໜອງແບບເປັນຕ່ອງໂສ້

**ມີຫລາຍໆຄໍານິຍາມ ແລະ ເອກກະສານອ້າງອີງກ່ຽວກັບການວິເຄາະການສະໜອງແບບເປັນຕ່ອງໂສ້ ທີ່ໄດ້ນໍາສະເໜີໃນໄລຍະການປະຕິບັດວຽກກັບກຸ່ມວິຊາການ ແລະ ໃນລະຫວ່າງກອງປະຊຸມຂອງ GTC ກັບນັກສໍາມະນາກອນ ທີ່ຢູ່ໃນຕ່ອງໂສ້ການສະໜອງກາເຟນີ້ (ເບິ່ງລາຍລະອຽດບົດສະເໜີຢູ່ໃນເອກກະສານຊ້ອນທ້າຍ 5).**

**ບັນດາອົງປະກອບທີ່ສໍາຄັນ ອາດສະຫລຸບສັງລວມໄດ້ຂ້າງລຸ່ມນີ້:**

**ເປັນຫຍັງຈຶ່ງມີການສຶກສາຄວາມຕໍ່ເນື່ອງຂອງການສະໜອງຈາກຜູ້ຜະລິດເຖິງຕະຫລາດ, ເປັນຫຍັງຈຶ່ງບໍ່ພຽງແຕ່ປຽບທຽບການສະໜອງ ແລະ ຄວາມຕ້ອງການ? ຊຶ່ງມີ 3 ເຫດຜົນດັ່ງລຸ່ມນີ້**

(i) ເມື່ອຜະລິດຕະພັນໄດ້ແຈກຢາຍຮອບວຽນ ຈາກບ່ອນຜະລິດຫາບ່ອນຈໍາໜ່າຍ, ຊຶ່ງມັນແມ່ນການແລກປ່ຽນບໍ່ແມ່ນແຕ່ຕະຫລາດດຽວເທົ່ານັ້ນ ແຕ່ແມ່ນກັບຫລາຍໆຕະຫລາດ % ການຜະລິດ ຫລື ຕະຫລາດຊົນນະບົດ; ຜູ້ຂາຍຍົກ ໃນລະດັບການສົ່ງອອກ; ແລະ ຮ້ານຄ້າຕ່າງໆ.

(ii) ລັກສະນະທໍາມະຊາດ ແລະ ຊະນິດຂອງຜະລິດຕະພັນ ແມ່ນມີການປ່ຽນແປງຢູ່ໃນຕາມຕ່ອງໂສ້ນັ້ນ. ຜູ້ຜະລິດໄດ້ຂາຍເມັດກາເຟດິບ ຫລື ຍັງມີເປືອກຫຸ້ມຢູ່. ຜູ້ຊື້ແມ່ນໄດ້ຄັດເມັດກາເຟ, ຕາກແຫ້ງ. ຮ້ານຄ້າແມ່ນຂາຍກາເຟຂົ້ວ ແລະ ສ່ວນຫລາຍແມ່ນກາເຟບົດ ແລະ ກາເຟລະລາຍ ແລະ ຜະລິດຕະພັນແປຮູບຕ່າງໆ.

(iii) ໃນແຕ່ລະຂັ້ນຕອນ, ແມ່ນມີຄວາມແຕກຕ່າງຂອງແຕ່ລະຄົນ ແລະ ຜູ້ມີສ່ວນຮ່ວມ. ລະດັບໃຫຍ່ ແລະ ລະດັບນ້ອຍ ແມ່ນມີທິດທາງໄປຫາຕະຫລາດພາຍໃນ ແລະ ຕະຫຼາດສົ່ງອອກ ໂດຍສະເພາະແມ່ນກາເຟ ຫລື ອັນອື່ນໆ.... ພວກເຂົາເຈົ້າບໍ່ມີເປົ້າໝາຍອັນດຽວກັນ ຫລື ການຄຸ້ມຄອງຄືກັນ.

**ຕ່ອງໂສ້ການສະໜອງ ແມ່ນຫຍັງ?** ຕ່ອງໂສ້ການສະໜອງ ຫລື "filière" ໃນພາສາຝລັ່ງ ແມ່ນບັນດາກິດຈະກໍາທີ່ເຊື່ອມຕໍ່ ຫລື ມີການຂຶ້ນກັບກັນແລະກັນ ໃນຂັ້ນຕອນຕ່າງໆ ຂອງຂະບວນການຜະລິດ. ຍິ່ງໄປກ່ວານັ້ນ, ມັນໄດ້ມີສ່ວນຮ່ວມບໍ່ພຽງແຕ່ການໄຫລວຽນຂອງຜະລິດຕະພັນ, ເງິນ ແລະ ຂໍ້ມູນຂ່າວສານ ແຕ່ວ່າຍັງມີບັນດາຍຸດທະສາດ ໃນລະດັບທາງດ້ານເສດຖະກິດຂອງຜູ້ມີສ່ວນຮ່ວມ ຢູ່ໃນຕ່ອງໂສ້ນັ້ນ. ສິ່ງດັ່ງກ່າວນີ້ມັນໄດ້ສະແດງອອກໃນຄໍານິຍາມຂອງ ຕ່ອງໂສ້ການສະໜອງ ທີ່ສະເໜີໂດຍ Fabre *et al (*1996): «ແມ່ນຊຸດນຶ່ງຂອງບັນດານັກເສດຖະກິດ ແລະ ສິ່ງທີ່ກ່ຽວພັນຂອງພວກເຂົາ ທີ່ໄດ້ສະໜອງໃຫ້ແກ່ການ ຜະລິດ, ແປຮູບ,ຈໍາໜ່າຍ ແລະ ການບໍລິໂພກຜະລິດຕະພັນ»

ອີງຕາມ Malassis ແລະ Ghersi (1996), ການກໍານົດກ່ຽວກັບຕ່ອງໂສ້ການສະໜອງແມ່ນ ໄດ້ອີງໃສ່ບັນດາບໍລິສັດ, ສະຖາບັນ ຫລື ການປະຕິບັດການ ຫລື ຄວາມຫລາກຫລາຍ, ການຕໍ່ລອງລາຄາ, ເຕັກໂນໂລຊີ, ການຜະລິດແລະສິ່ງທີ່ກ່ຽວຂ້ອງ, ການຈັດວາງລາຄາຂອງຜະລິດຕະພັນ ແລະ ອື່ນໆ.

ມັນມີຕະຫລາດທີ່ແຕກຕ່າງກັນໃນທົ່ວຕ່ອງໂສ້ການສະໜອງອາຫານທີ່ມາຈາກກະສິກໍາ ແລະ ບໍ່ສາມາດທີ່ຈະພັນລະນາໄດ້ຕາມຮູບແບບສະເພາະ ແລະ ມີການແຂ່ງຂັນທີ່ດີເລີດ. ໃນຕົວຈິງແລ້ວ ຫລາຍໆສະຖາບັນ, ຂໍ້ກໍານົດກົດລະບຽບ, ຄົນ ແລະ ສິ່ງທີ່ກ່ຽວຂ້ອງກັບທຸລະກິດ ກັບການຕັດສິນບັນຫາ ແລະ ຄໍານິຍາມ ກ່ຽວກັບຕະຫລາດ ແລະ ລາຄາ. ພວກເຂົາຈະຕ້ອງຄໍານຶງເຖິງ:

**ຈະວິເຄາະຕ່ອງໂສ້ການສະຫນອງແນວໃດ?**
ມີບັນດາວິທີການ ແລະ ໄດ້ສົນທະນາກັນແລ້ວໃນບັນດາກຸ່ມວິຊາການ. ສໍາລັບຈຸດປະສົງຂອງການສຶກສາຮ່ວມຂອງກາເຟລາວໜີ້, ພວກເຮົາຂໍສະເຫນີການຮັບເອົາ ຂັ້ນຕອນຕ່າງໆ ຕາມການສະເຫນີຂອງ Bourgeois ແລະ Herrera ດັ່ງລຸ່ມນີ້:

ຂັ້ນຕອນທີ 1: ວິໄສທັດລວທ ແລະ ການວິເຄາະສະພາບທົ່ວໄປ,
ການພົວພັນກັບເສດຖະກິດພາຍໃນ, ຕະຫລາດ ແລະ ຂໍ້ຕົກລົງທາງດ້ານການຄ້າ

ຂັ້ນຕອນທີ 2: ການກ່ຽວພັນກັບເສດຖະກິດແຫ່ງຊາດເສດຖະກິດ ແລະ ສັງຄົມ
ການກ່ຽວຂ້ອງຂອງຕ່ອງໂສ້ການສະຫນອງກັບເສດຖະກິດ ແລະ ສັງຄົມ, ນະໂຍບາຍ ແລະ ສະຖາບັນຕ່າງໆ

ຂັ້ນຕອນທີ 3: ໂຄງຮ່າງຂອງຕ່ອງໂສ້ການສະຫນອງ
ຄຸນລັກສະນະຂອງຜູ້ມີສ່ວນຮ່ວມ ແລະ ການອອກແບບ ຂອງຕ່ອງໂສ້ການສະຫນອງ

ຂັ້ນຕອນທີ 4: ຫນ້າທີ່ການຂອງຕ່ອງໂສ້ການສະຫນອງ
ວົງຈອນຫລັກ: ການເຄື່ອນໄຫວ ແລະ ຂໍ້ກໍານົດກົດລະບຽບ

ຂັ້ນຕອນທີ 5: ການອະທິບາຍກ່ຽວກັບຜົນໄດ້ຮັບ
ແຫລ່ງຂອງການແຂ່ງຂັນ ແລະ ບັນດາເງື່ອນໄຂທີ່ຈໍາກັດ.
ຕົວຊີ້ວັດ, ຄວາມຄິດ ແລະ ຮູບແບບໃນແຕ່ລະສະພາບ ຂອງສະຖານະການ.

## 3 - ຮ່າງສະເຫນີກ່ຽວກັບ ແຜນກິດຈະກໍາ ສໍາລັບ 2007

ກຸ່ມສະຫນັບສະຫນູນທາງດ້ານວິຊາການໄດ້ ສ້າງແຜນລະອຽດສໍາລັບແຕ່ລະຂັ້ນຕອນ ໃນການສຶກສາຕ່ອງໂສ້ການສະຫນອງ. ສໍາລັບແຕ່ລະກິດຈະກໍາທີ່ຕ້ອງໄດ້ປະຕິບັດ, ໄດ້ກໍານົດຂັ້ນຕອນ ການເກັບກໍາຂໍ້ມູນ ແລະ ໄດ້ສະເຫນີຫນ້າທີ່ແຕ່ລະພາກສ່ວນໃນການເກັບກໍາຂໍ້ມູນ ແລະ ລາຍລະອຽດ ຜົນໄດ້ຮັບ.
ຫນ້າທີ່ດັ່ງກ່າວນີ້ ສ່ວນຫລາຍ ແມ່ນໄດ້ອີງໃສ່ການຮ່ວມມືລະຫວ່າງ ຜູ້ຕາງຫນ້າ GTC ແລະ ສະມາ GTC ໃນຕ່ອງໂສ້ການຜະລິດ.

ເຖິງວ່າຈະຖືຕາມ 5 ຫລັກການທີ່ກ່າວມາຂ້າງເທິງນີ້ ກໍຕາມ, ກຸ່ມວິຊາການ ໄດ້ສະເຫນີໃຫ້ ເລີ້ມຕົ້ນການສຶກສາ ກັບບັນດາກິດຈະກໍາທີ່ກ່ຽວຂ້ອງໃນລະດັບຊາດ ແລະ ຕະຫລາດ (ຂັ້ນຕອນທີ່ 2) ໂດຍບໍ່ເອົາຕາມລະດັບສາກົນ (ຂັ້ນຕອນ ທີ 1). ດັ່ງນັ້ນ, ບາງຂໍ້ມູນເບື້ອງຕົ້ນແມ່ນໄດ້ມາຈາກ ຕະຫລາດພາຍໃນ. ນອກຈາກນັ້ນ, ມັນຍັງເປັນການແນະນໍາ ຄໍາຖາມກ້ວາງຂວາງ ແລະ ຍຸດທະສາດ ທີ່ກ່ຽວຂ້ອງກັບຕະຫລາດສາກົນ.
ຕາຕະລາງລຸ່ມນີ້ ແມ່ນ ສະແດງເຖິງລາຍລະອຽດ ແຕ່ລະບາດກ້າວ ຂອງການປະຕິບັດ, ວິທີການ ແລະ ສະຖານທີ່ປະຕິບັດ (ວຽງຈັນ ຫລື ປາກເຊ) ແລະ ສະເຫນີຫນ້າທີ່ຮັບຜິດຊອບ ໃນການ ຈັດຕັ້ງປະຕິບັດ.

บັນດາຄຳສັບຫຍໍ້ທີ່ໃຊ້ໃນຕາຕະລາງ:

VTE: ວຽງຈັນ ; PKE : ປາກເຊ

PAB: ໂຄງການຍ່ອຍ ພູພຽງບໍລະເວນ (ທ່ານ B. Sallée ແລະ ຜູ້ຮ່ວມງານ)

Ch.K: ທ່ານ ນ. ຈິດປະສົງ ກຸສອນສະຫວັນ ອາຈານສອນຂະແໜງກະສິກຳກະເສດນາບົງ

UC: ຫ້ອງການປະສານງານສູນກາງ /ໂຄງການສະໜັບສະໜູນນະໂຍບາຍການພັດທະນາຊົນນະບົດ ( ທ່ານ S. Shepley ແລະ ຜູ້ຮ່ວມງານ)

GTC: ກຸ່ມວິຊາການກາເຟ

LCA: ສະມາຄົມກາເຟລາວ

# 1. ຕະຫລາດພາຍໃນ

| ຂໍ້ມູນ | ການປະຕິບັດ ແລະ ວິທີການ | ຢູ່ໃສ ? | ຜູ້ຮັບຜິດຊອບ ແລະ ຜູ້ຮ່ວມງານ GTC |
|---|---|---|---|
| • ຜູ້ຊື້ກາເຟ : | **ແຫລ່ງການປະຕິບັດ, ບໍລິມາດການຕະຫລາດ ແລະ ສະຖານທີ່ສົ່ງ.** | | |
| o ຂະຫນາດນ້ອຍ | ລາຍຊື່ຜູ້ຊື້ກາເຟ ໃນປາກເຊ + ສໍາຫລວດຕົວຢ່າງ 20% | ປາກເຊ | PAB ແລະ ຜູ້ຊື້ກາເຟ |
| o ໂຮງງານ | ການສໍາຫລວດລະອຽດຂອງໂຮງງານຊື້ກາເຟ (2 ແຫ່ງ ໃນວຽງຈັນ + 2 ແຫ່ງທີ່ປາກເຊ = 4) | ວຽງຈັນ<br>ປາກເຊ | ທ່ານ ນ. ຈິດປະສົງ ແລະຜູ້ຊື້ກາເຟ<br>PAB ແລະຜູ້ຊື້ກາ ເຟ (ສີຫນຸກ, ດາວກາ ເຟ) |
| • ຮ້ານຂາຍກາເຟ | **ການສຶກສາໃລຍະສັ້ນ(ລາຍການ) ກ່ຽວກັບຊະນິດຂອງຜະລິດ ຕະພັນກາເຟທີ່ຂາຍ, ພາຊະນະຫຸ້ມຫໍ່, ລາຄາ, ແຫລ່ງ, ລາຍລະອຽດ ຂອງຜູ້ບໍລິໂພກ. ຖ້າເປັນໄປໄດ້ແມ່ນ ໃຫ້ຖາມ ສໍາພາດກ່ຽວກັບການເຄື່ອນໄຫວກ່ຽວກັບຕະຫລາດກາເຟ..** | | ທ່ານ ນ. ຈິດປະສົງ |
| o ຮ້ານຂາຍຍ່ອຍ | ວຽງຈັນ: ຮ້ານມິນິມາກ (ທີ່ຢູ່ໃນເຂດທີ່ກໍານົດໄວ້)<br>ຮ້ານກາເຟທີ່ໄດ້ຖືກຕັດເລືອກ | ວຽງຈັນ: | PAB<br>ທ່ານ ນ. ຈິດປະສົງ |
| o ຕະຫລາດ | ປາກເຊ: ຮ້ານຂາຍຍ່ອຍ ແລະ ຮ້ານກາເຟ<br>ຢ້ຽມຢາມຕະຫລາດ: ການກໍານົດກ່ຽວກັບຄຸນນະພາບແລະລາຄາ | ປາກເຊ:<br>ວຽງຈັນ: | PAB<br>ທ່ານ ນ. ຈິດປະສົງ, |
| • ຜູ້ບໍລິໂພກ | **ຄໍາຖາມນ້ອຍໆສໍາລັບຮ້ານກາເຟ 2 ຮ້ານໃນວຽງຈັນ** (ອາດຈະຕອບໂດຍ | ປາກເຊ: | ຫ້ອງການປະສານງານ, |

| | | | |
|---|---|---|---|
| | ຜູ້ບໍລິໂພກແລ້ວ ຝາກໄວ້ນຳຮ້ານກາເຟ) | ວຽງຈັນ: | ຜູ້ຄ້າຂາຍ |
| • <u>ຂໍ້ກຳນົດກົດລະບຽບ</u><br>o ອາຫານ<br>o ການຄ້າ | **ລາຍການເອກະສານກ່ຽວກັບຂໍ້ກຳນົດກົດລະບຽບທີ່ມີໃນລະດັບຊາດກ່ຽວກັບການຜະລິດກາເຟ, ການຄ້າ, ພາຊະນະຫຸ້ມຫໍ່ ແລະ ສະຫລາກ** | ວຽງຈັນ: | UC, ກະຊວງກປ,<br>ກະຊວງການຄ້າ,<br>ກະຊວງສາທາລະນະສຸກ |

# 2. ຕະຫລາດສາກົນ

| ຂໍ້ມູນ Data output | ການປະຕິບັດ ແລະ ວິທີການ | ຢູ່ໃສ ? | ຜູ້ຮັບຜິດຊອບ ແລະ ຜູ້ຮ່ວມງານ GTC |
|---|---|---|---|
| • ສະຖິຕິການສົ່ງອອກ | ສະຖິຕິການສົ່ງອອກໃນໃລຍະ 10 ປີ (ບໍລິມາດ, ອັດຕາສ່ວນຂອງ ໂຮບຸດສະຕາ/ອາຣາບິກາ, ປາຍທາງ, ລາຄາ, ຜູ້ຊື້) | ປາກເຊ + ວຽງຈັນ | ຈຸດພູພຽງບໍລິເວນ PAB, ສະມາຄົມກາເຟລາວ |
| • ການສຳຫລວດຜູ້ນຳເຂົາ | **ຄຳຖາມຕາມ ອີແມລ ທີ່ສົ່ງໄປຕາມທີ່ຢູ່ຂອງຜູ້ຊື້ປະຈຸບັນ ແລະ** ຜູ້ກ່ອນ ທີ່ຊື້ກາເຟລາວ: ການກະຕຸ້ນ, ຄວາມຮູ້ສຶກ, ຂໍ້ສະເຫນີ. | ປາກເຊ + ວຽງຈັນ | ຈຸດພູພຽງບໍລິເວນ PAB, ແລະທີ່ຢູ່ໂດຍ ຜ່ານຜູ້ສົ່ງອອກ |
| • ພາສີການສົ່ງອອກ ແລະ ຂໍ້ກຳນົດກົດລະບຽບ | ບົດລາຍງານ, ການແຈ້ງ ແລະການສອບຖາມພໍ່ຄ້າ ແລະຜູ້ສົ່ງອອກກ່ຽວກັບລະບຽບການແລະພາສີ. ການສອບຖາມກະຊວງກ່ຽວຂ້ອງ ແລະ ພະນັກງານ (ກະຊວງການຄ້າແລະອຸດສະຫະກຳ/ຫົວຫນ້າກົມການຄ້າ ແລະ ອົງການວິທະຍາສາດແລະ ເຕັກໂນໂລຊີ). ຂໍ້ກຳ ນົດແຫ່ງຊາດແລະແຂວງ | ປາກເຊ + ວຽງຈັນ | ກຸ່ມວິຊາການ, ພາກສ່ວນການຄ້າ ແລະ ຜູ້ສົ່ງ ອອກ ແລະ ຈຸດນຳ ໃຊ້ PAB ທ່ານ ນ. ຈິດປະສົງ, ຫ້ອງການປະສານງານໂຄງການ, ກະຊວງການຄ້າ, ເຈົ້າຫນ້າທີ່ແຂວງ ພະແນກກະສິກຳ, ສະພາການຄ້າລາວ |
| • ຂັ້ນຕອນການສົ່ງອອກແລະລາຄາ | ການສຶກສາຜູ້ສົ່ງອອກ(ລະອຽດ), ການສຳຫລວດພາສີ | | |
| • ການຕົກລົງທາງດ້ານການຄ້າ | GSP, ລະບຽບລາວ-ໄທ, ຫລືຂໍ້ຕົກລົງສາກົນ | ປາກເຊ<br>ປາກເຊ | PAB, ທ່ານ ນ. ຈິດປະສົງ.<br>PAB, ທ່ານ ນ. ຈິດປະສົງ ຫ້ອງການປະສານງານໂຄງການ, |

| | | | |
|---|---|---|---|
| • ຄວາມເປັນໄປໄດ້ຂອງການສຶກສາ | o ຄວາມຄືບໜ້າຂອງມາດຕະຖານ(ໂດຍທົ່ວໄປ, ກາເຟໂດຍສະເພາະ)<br>o ການເຄື່ອນໄຫວຂອງຕະຫລາດໂລກ<br>o ລະບຽບຂອງອົງການການຄ້າໂລກ<br>o ໂຄງສ້າງຂອງພາກພື້ນແມ່ນນ້ຳຂອງ (ACMECS) | ປາກເຊ , ວຽງຈັນ | ພູພຽງບໍ ລະເວນ ແລະ ພໍ່ຄ້າ, ກະຊວງການຄ້າ, ສະພາການຄ້າ<br><br>PAB,ຫ້ອງການປະສານງານ, ທ່ານ ສີນຸກ ສີສົມບັດ ແລະ ການປະກອບສ່ວນ ຂອງນັກວິຊາການທຸກຄົນ |

## 3. ການວິເຄາະທາງດ້ານໂຄງສ້າງ ຂອງຕ່ອງໂສ້ການສະໜອງ

| ຂໍ້ມູນ | ການປະຕິບັດ ແລະ ວິທີການ | ຢູ່ໃສ ? | ຜູ້ຮັບຜິດຊອບ ແລະ ຜູ້ຮ່ວມງານ GTC |
|---|---|---|---|
| • ເງື່ອນໄຂໃນການສະໜອງ | ການວິເຄາະຂະແໜງການທີ່ມີສ່ວນຮ່ວມກັບກາເຟ ກ່ຽວກັບການສຳຫລວດສັ້ນໆ ທີ່ບ່ອນຂາຍຍົກ ແລະ ຮ້ານຂາຍຍ່ອຍ | ປາກເຊ | ໂຄງການຍ່ອຍບໍລະເວນ, ທ່ານ ນ ຈິດປະສົງ |
| • ການຜະລິດກາເຟ<br>o ບໍລິສັດ<br>o ບ້ານ | ການນຳໃຊ້ດິນໃນບໍລະເວນ: ເຂດແລະ ອັດຕາສ່ວນການປະສົມປະສານຂອງ ລະບົບການຜະລິດ ໃນການສຶກສາຂອງ ໂຄງການຍ່ອຍບໍລະເວນ | ປາກເຊ | ໂຄງການຍ່ອຍບໍລະເວນ, ພະແນກກະສິກຳແຂວງຈຳປາສັກ |
| | ເພີ້ມຂໍ້ມູນໃນລະດັບບ້ານ ທີ່ສຸມໃສ່: ສັນຍາການຂາຍ, ແຮງງານໃນການເກັບກູ້ກາເຟ, ໂຮບຸສະຕາໃນເຂດເນີນສູງ ໃນອະນາຄົດ, ຜູ້ຜະລິດ ແລະ ອົງການຈັດຕັ້ງ. | ປາກເຊ | ໂຄງການຍ່ອຍບໍລະເວນ, ທ່ານ ນ ຈິດປະສົງ, ພະແນກກະສິກຳແຂວງຈຳປາສັກ, GTC ຜູ້ຜະລິດ ນັກຮຽນກະເສດນາບົງ ? |
| • ຜູ້ແປຮູບ | ການສຶກສາເຄື່ອງຈັກປອກແລະສີກາເຟໃນໂຮງງານອຸດສະຫະກຳການວິເຄາະການສຶກສາທີ່ໄດ້ປະຕິບັດແລ້ວ.<br>ເພີ້ມຂໍ້ມູນຈາກບ້ານທີ່ໄດ້ສຸມໃສ່ຈຳນວນຜູ້ປະຕິບັດ ແລະ ຄວາມອາດສາມາດໃນການຂົນສົ່ງ | ປາກເຊ | ໂຄງການຍ່ອຍບໍລະເວນ, ທ່ານ ນ ຈິດປະສົງ, ພະແນກກະສິກຳແຂວງຈຳປາສັກ, ຜູ້ຜະລິດ GTC |
| • ຜູ້ເກັບຊື້ແລະຂົນສົ່ງ | ການປະເມີນການບໍລິການທີ່ມີແລ້ວ<br>ລາຍງານໂດຍການສອບຖາມກັບພໍ່ຄ້າ ແລະ ຜູ້ສົ່ງອອກ | ປາກເຊ | ໂຄງການຍ່ອຍບໍລະເວນ, ທ່ານ ນ ຈິດປະສົງ, ພະແນກກະສິກຳແຂວງຈຳປາສັກ, ຜູ້ຜະລິດ |
| • ການໃຫ້ກູ້ຢືມ ແລະ ການຂະຫຍາຍ | ລາຍງານໂດຍການສອບຖາມກັບພໍ່ຄ້າ ແລະ ຜູ້ສົ່ງອອກ | ປາກເຊ | ໂຄງການຍ່ອຍບໍລະເວນ,ຜູ້ປູກ,ຜູ້ຜະລິດ, ຜູ້ຂາຍ |

| | | | |
|---|---|---|---|
| • ຫ້ອງວິໃຈແລະການຢັ້ງຢືນ<br><br>• ຜູ້ຂາຍຍົກ/ຜູ້ສົ່ງອອກ<br><br>• ການປະຕິບັດການນອກດ່ານ<br>o ການຂົນສົ່ງສາກົນ<br>o ຄ່າແຮງງານ<br>o ໃບຢັ້ງຢືນ | ລາຍງານໂດຍການສອບຖາມກັບພໍ່ຄ້າ ແລະ ຜູ້ສົ່ງອອກ<br><br>ຢ້ຽມຢາມສະຖານທີ່ສົ່ງອອກ | ປາກເຊ<br><br>ປາກເຊ<br><br>ປະທດໄທ | ໂຄງການຍ່ອຍບໍລະເວນ, ທ່ານ ນ ຈິດປະສົງ, ຜູ້ຄ້າຂາຍ<br>ໂຄງການຍ່ອຍບໍລະເວນ,, ທ່ານ ນ ຈິດປະສົງ, GTC ຜູ້ຄ້າຂາຍ<br>ໂຄງການຍ່ອຍບໍລະເວນ,, ທ່ານ ນ ຈິດປະສົງ, ຫ້ອງການປະສານງານ , GTC ຜູ້ຄ້າຂາຍ |

## 4. ການວິເຄາະກ່ຽວກັບໜ້າທີ່

| ຂໍ້ມູນຂ່າວສານ | ການປະຕິບັດ ແລະ ວິທີການ | ຢູ່ໃສ ? | ຜູ້ຮັບຜິດຊອບ ແລະ ຜູ້ຮ່ວມງານ GTC |
|---|---|---|---|
| ລາຍລະອຽດກ່ຽວກັບວົງຈອນ ຫລັກ: ການເຄື່ອນໄຫວ ແລະ ລະບຽບ ການ | ໃນຂັ້ນຕອນນີ້ ການເກັບກຳຂໍ້ມູນ ໃນຂັ້ນຕອນ ທີ 3 "ແມ່ນການວິເຄາະ ຫາໂຄງຮ່າງ ຊຶ່ງແມ່ນ ການເອົາເຂົ້າ ໃສ່ກັນ ເພື່ອໃຫ້ມີຮູບພາບທົ່ວໄປ ຂອງໜ້າທີ່ຂອງຕ່ອງ ໂສ້ການສະໜອງ | | ການກະກຽມຂໍ້ມູນໃນການປະຕິບັດວຽກຂອງກຸ່ມວິຊາການລາຍລະອຽດ ແລະ ານເປັນເອກກະພາບກ່ຽວກັບຕາຕະລາງ ແລະ ເສັ້ນສະແດງ ເພື່ອໃຫ້ລາຍລະອຽດເພີ້ມເຕີມ ໃນກອງປະຊຸມຄັ້ງທີ 2 ຂອງຄະນະກຳມະການກຸ່ມວິຊາການທີ່ປາກເຊນີ້ງມື້. |
| • ຊ່ອງທາງການຕະຫລາດ | • ຈຳນວນແລະຊະນິດຂອງຜູ້ມີສ່ວນຮ່ວມໃນຕ່ອງໂສ້ການ ສະໜອງກາເຟທັງໝົດ"ຕາຕະລາງການວິເຄາະໜ້າທີ່" | ປາກເຊ | |
| • ບໍລິມາດ | • ການຈັດຕັ້ງ ແລະ ການພົວພັນລະຫວ່າງ ບັນດາ ຊ່ອງທາງຕະຫລາດຕ່າງໆ: "ເສັ້ນສະແດງຂອງຕ່ອງໂສ້ການຜະລິດ" | | |
| • ລາຄາ | • ຮູບຮ່າງໂຄງສ້າງລາຄາ | | |
| • ຂໍ້ມູນຂ່າວສານແລະການຕັດສິນ | • ການກຳນົດ ກ່ຽວກັບຂອດທີ່ສຳຄັນ ແລະ ການຕັດສິນ ແລະ ຈຸດທີ່ຕ້ອງຄວບຄຸມ | | |

## 5. ການວິເຄາະ/ການອະທິບາຍ

| ຂໍ້ມູນຂ່າວສານ | ການປະຕິບັດ ແລະ ວິທີການ | ຢູ່ໃສ ? | ຜູ້ຮັບຜິດຊອບ ແລະ ຜູ້ຮ່ວມງານ GTC |
|---|---|---|---|
| ການຄາດຄະເນ ແລະ ມີເປົ້າໝາຍຮ່ວມກັນ ຂໍ້ຈຳກັດທີສຳຄັນ ແລະ ການປັບປຸງໃນພາຍໜ້າແລະສຳລັບຕ່ອງໂສ້ການສະໜອງກາເຟລາວ | • ແຫລ່ງຂອງການປັບປຸງ<br>• ຈຸດດີ ແລະ ຈຸດອ່ອນ<br>• ໂອກາດ ແລະ ບັນຫາ (ເສັ້ນສະແດງSWOT )<br>• ທ່າແຮງໃນການເພີ້ມຄຸນຄ່າລາຄາ<br>ການເກີດຂື້ນຂອງຄວາມເປັນໄປໄດ້ໃນການຜະລິດ ແລະ ການປະຕິບັດການຕະຫລາດ ແລະ ກົດລະບຽບ (ພາສີ, ກຳນົດລາຄາ ທີ່ບໍ່ປ່ຽນແປງ, ການໃຫ້ລາງວັນ ....) | | ສ້າງສະຖານະການໂດຍສະມາຊິກຄະນະວິຊາການ GTC ທີ່ມີຄວາມສົນໃຈ<br><br>ອະທິບາຍ :ສະມາຊິກ GTC ທຸກຄົນ (ກອງປະຊຸມສຳມະນາ) |

## 4 - ສະຫລຸບສັງລວມ

ການຈັດຕັ້ງການສຶກສາຮ່ວມ ທີ່ໄດ້ສະເຫນີໃນຕາຕະລາງຂ້າງເທິງນີ້, ໄດ້ເຮັດໃຫ້ມີການປະກອບສ່ວນຂອງຫມົດທຸກຄົນໃນກຸ່ມວິຊາການ GTC ເຊັ່ນ: ຜູ້ປູກ, ຜູ້ຜະລິດ ແລະ ຜູ້ຂົ້ວ, ພໍ່ຄ້າຂາຍ ແລະ ຜູ້ສົ່ງອອກ, ສະມາຄົມກາເຟລາວ ແລະ ອົງກອນທີ່ສະຫນັບສະຫນູນ ໃນລະດັບຊາດ (ກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສະຫະກຳ ແລະ ການຄ້າ, ສະພາການຄ້າ) ແລະ ລະດັບແຂວງ (ພະແນກກະສິກຳ ແລະ ປ່າໄມ້ແລະອຳນາດການປົກຄອງແຂວງ).

ການເກັບກຳຂໍ້ມູນ ອາດຈະເລີ້ມຕົ້ນທັນທີ ແຕ່ຕ້ອງມີການວາງແຜນຢ່າງດີ ເພື່ອ ໃຫ້ຢູ່ໃນລະດູການການຜະລິດ ແລະ ທຸລະກິດຂອງກາເຟ. ນັກສຳມະນາກອນ ທີ່ຢູ່ໃນກຸ່ມວິຊາການ ອາດຈະສະຫນອງບາງຫົວ ຂໍ້ໂດຍຄວາມ ຊ່ຽວຊານຂອງເຂົາເຈົ້າເອງ(ຍົກຕົວຢ່າງ: ວິວັດທະນາການ ແລະ ແນວໂນ້ມ ຂອງຕະຫລາດພາຍໃນຂອງກາເຟຂົ້ວ; ການລາຍງານກ່ຽວກັບການປະຕິບັດທາງດ້ານການຄ້າ ແລະ ຂັ້ນຕອນ, ວິວັດທະນາ ການທາງ ດ້ານ ເຄື່ອງມື ສຳລັບຜະລິດກາເຟ ແລະ ຂົນສົ່ງໃນເຂດຊົນນະບົດ; ລະບຽບການ ທາງດ້ານ ສຸຂະອະນາໄມ ທີ່ຈະຕ້ອງ ໄດ້ປະຕິບັດສຳລັບການຄ້າກາເຟ ແລະ ສົ່ງອອກ ແລະ ອື່ນໆ. ພວກເຂົາອາດຈະປະກອບສ່ວນ ໃນການ ອຳນວຍ ຄວາມສະດວກໃນການສອບຖາມ ແລະ ພົວພັນ.

ພາກສ່ວນທີ່ສຳຄັນນຶ່ງຂອງການສຶກສາຈະຕ້ອງໄດ້ປະຕິບັດໃນເຂດປາກເຊ, ເອົາຂໍ້ມູນທີ່ມີເກັບໄວ້ ແລະການສຶກສາຂອງໂຄງການທີ່ຜ່ານມາກ່ຽວກັບຫົວຂໍ້ດັ່ງກ່າວ. ເວລາຈະຮຽກຮ້ອງໃຫ້ມີການປັບປຸງບັນດາຂໍ້ມູນນັ້ນ. ຍິ່ງໄປກ່ວານັ້ນ, ຈຳນວນຂອງຂໍ້ມູນທຳອິດແມ່ນຕ້ອງໄດ້ເກັບກຳ ຈາກຜູ້ມີສ່ວນຮ່ວມໃນຕ່ອງໂສ້ການສະຫນອງກາເຟ. ການະປກອບສ່ວນຂອງໂຄງການຍ່ອຍບໍລະເວນ ທີ່ມີສະຖານທີ່ຢູ່ທີ່ປາກເຊ ຈະເປັນສິ່ງທີ່ສຳຄັນ ແຕ່ມັນຈະຕ້ອງເພີ້ມເຕີມດ້ວຍການປະກອບສ່ວນຂອງກຸ່ມວິຊາການ GTC ແລະ ຈາກຫ້ອງການປະສານງານໂຄງການສູນກາງ PCADR/ UC ເຊັ່ນດຽວກັບມະຫາວິທະຍາໄລກະເສດສາດນາບົງ.

ບົດບາດຂອງກຸ່ມວິຊາການ ແມ່ນມີຄວາມສຳຄັນໃນການສະຫນັບສະຫນູນການຈັດຕັ້ງ ແລະ ຮັບປະກັນວ່າ ບັນດາວິທີການແມ່ນໄດ້ປະຕິບັດ ໃນການເກັບກຳຂໍ້ມູນ ແລະ ໄດ້ຈັດການ. ແຕ່ການປະກອບສ່ວນຕົວ ຫລື ລວມກັນຂອງກຸ່ມວິຊາການແມ່ນຍິນດີ ໃນຂະບວນການ ການພ້ອມພຽງກັນ ແລະ ປັບປຸງພາບທັດສະນີຍະພາບຂອງຕ່ອງໂສ້ການສະຫນອງກາເຟ.

ໄດ້ມີການສະເຫນີວ່າວຽກງານຕ້ອງໄດ້ເລີ້ມຕົ້ນດ້ວຍການສຶກສາຕະຫລາດແຫ່ງຊາດ ສຳລັບກາເຟສຳເລັດຮູບ ທີ່ມີຈຳນວນຈຳກັດ, ສະແດງສິ່ງທີ່ບົ່ງບອກເຖິງ ການເຄື່ອນໄຫວແຕກຕ່າງກັນ (ທີ່ພົວພັນກັບຄວາມ ຫລາກຫລາຍ ຂອງກາເຟຂົ້ວ ແລະ ເພື່ອການຂະຫຍາຍຂອງຕົວເມື້ອງ ແລະ ການບໍລິໂພກຂອງນັກທ່ອງທ່ຽວ). ບົດລາຍງານຈາກອົງປະກອບນີ້ສາມາດສະຫນອງ ຄຳຄິດຄຳເຫັນທີ່ຫນ້າສົນໃຈສຳລັບກອງປະຊຸມຄັ້ງຕໍ່ໄປ.

ການປະເມີນຂອງຜົນໄດ້ຮັບເບື້ອງຕົ້ນທີ່ໄດ້ມາ ແລະ ການໄດ້ຮັບປັດໃຈເພີ້ມເຕີມ ແລະ ລາຍລະອຽດ ກ່ຽວກັບວິທີການວິເຄາະຕ່ອງໂສ້ການສະຫນອງກາເຟ ຈະສະຫນອງໃຫ້ ໃນການສືບຕໍ່ການຊ່ວຍເຫລືອ ສະຫນັບສະຫນູນໃນການປະຕິບັດງານທີ່ຈະຈັດຂຶ້ນໃນປີ 2007.

# ເອກະສານອ້າງອີງ


Bourgeois R., Herrera D., 1998. \, Montpellier, 175 p.

Duris D., Bonnal P., Pilecki A., 2002. ຕ່ອງໂສ້ກາເຟລາວ ແລະ ຍຸດທະສາດ. ການປູກ ແລະ ການຄົ້ນຄ້ວາ ການພັດທະນາ (ພຶດສະພາ 2002), pp. 60-74.

Fabre P., Bonnet P., Despréaux D., Freud C., Lassoudière A. et Raoult-Wack A.L., 1996. ແນວຄວາມຄິດກ່ຽວກັບຕ່ອງໂສ ້: ເຄື່ອງມືສໍາລັບການທົດລອງ ຂອງ. CIRAD. ສະບັບດັດແກ້ ໂດຍ Cirad, ເອກະສານບັນທຶກເລດທີ 24, Montpellier, 28 p.

GTC, 2006. ບົດລາຍງານກອງປະຊຸມກຸ່ມວິຊາການການເຟ ຄັ້ງທີ 1 (GTC). Vientiane, 32 p.

JICA 2005 ນະໂຍບາຍທາງດ້ານເສດຖະກິດມະຫາພາກ ສໍາລັບການພັດທະນາເສດຖະກິດສັງຄົມ ຂອງ ສ ປປ ລາວ ໃລຍະ ທີ 2. ບົດລາຍງານຫລັກ, ສະບັບທີ 1; ມີນາ 2005

Malassis L. et Ghersi G., 1996. *ເສດຖະສາດການຜະລິດ ແລະ ການບໍລິໂພກ, ວິທີການ ແລະ ແນວຄວາມຄິດ, ສະບັບທີ* , 2ème édition, Paris, 393 p.

PCADR, 1999. ຕ່ອງໂສ້ການເຟໃນ ພູພຽງບໍລະເວນ, ໂຄງການພັດທະນາຊົນນະບົດພູພຽງບໍລະເວນ. ປາກເຊ, ກໍລະກົດ 1999, 63 p.

PCADR, 2005. ການສຶກສາກາເຟໃນ ສປປ ລາວ, ໂຄງການສະຫນັບສະຫນູນການພັດທະນາຊົນນະບົດ, ຫ້ອງການປະສານງານໂຄງການ. 28 p.

PCADR /PAB, 2006. ການປັບປຸງຕ່ອງໂສ້ກາເຟລາວ, ສະຖານທີ່ປະກອບການ ແລະ ການສ້າງສະພາກາເຟລາວ ແລະ ໂຄງສ້າງ, ປາກເຊ , 8 p

Sautier D., 2005 ການຝຶກອົບຮົມຊາວສວນ ກ່ຽວກັບການຕະຫລາດ ແລະ ສິ່ງແວດລ້ອມ: ວິທີການສອນ ແລະ ການກັບຮັກສາກາເຟໃນພູພຽງບໍລະເວນ. ມະຫາວິທະຍາໄລແຫ່ງຊາດລາວ - ຂະແຫນງກະເສດນາບົງ/ ອົງການ ຝຣັ່ງເສດ ເພື່ອການພັດທະນາ- ໂຄງການ PAFA. ບົດລາຍງານ Cirad-Tera N°13 / 2005, 22 p.

# ເອກກະສານຊ້ອນທ້າຍ

ເອກກະສານຊ້ອນທ້າຍ 1. ພາລະບົດບາດຂອງວຽກທີ່ຈະປະຕິບັດ mission

ເອກກະສານຊ້ອນທ້າຍ 2. ກຸ່ມວິຊາການກ່ຽວກັບກາເຟ GTC – ສະມາຊິກຂອງຄະນະກຳມະການ ທີ 2

ເອກກະສານຊ້ອນທ້າຍ 3. ຕາຕະລາງເຮັດວຽກ

ເອກກະສານຊ້ອນທ້າຍ 4. ກອງປະຊຸມຄັ້ງທີ 2 ຂອງກຸ່ມວິຊາການກາເຟ GTC (17.01.2007): *ຕາຕະລາງ*

ເອກກະສານຊ້ອນທ້າຍ 5. ບັດສະເຫນີຂອງກຸ່ມວິຊາການກາເຟ GTC ໃນ ກອງປະຊຸມຄັ້ງທີ 2 ຄັ້ງວັນທີ (17.01.2007): "ການຮ່ວມກັນຄາດຄະເນໃນຕ່ອງໂສ້ການສະຫນອງກາເຟ"

ເອກະສານຊ້ອນທ້າຍ 1 : ພາລະບົດບາດຂອງການປະຕິບັດງານ

République Démocratique Populaire Lao
Paix Indépendance Démocratie Unité Prospérité

---

Ministère de l'Agriculture et des Forêts
Bureau Provincial de l'Agriculture et des Forêts
Point d'Application des Bolovens[1]

**TERMES DE REFERENCE POUR**

**DEUX MISSIONS COURTES D'UN EXPERT EN ANALYSE DE FILIERES**

## Contexte et antécédents

La filière café lao vient de se doter d'un Groupe de Travail Café (GTC) qui a un double objectif (voir note de cadrage sur le GTC en annexe) :

1. **Faire des propositions** au gouvernement pour la création du « Conseil National du Café Lao» (CNCL) ; représentativité, règlement, pouvoirs, budget, etc.

2. **Réaliser un diagnostic participatif** de la filière qui servira de base au futur CNCL pour élaborer sa stratégie de développement à court, moyen et long terme.

La mission d'expert requise concerne exclusivement l'objectif n°2.

Pour réaliser cet objectif n°2, le GTC a créé une commission ad hoc. Cette commission reçoit l'appui d'un groupe d'assistance technique (voir note de cadrage sur le GTC en annexe) composé de :

- un membre de l'Unité Centrale du PCADR[2], ce groupe ayant déjà beaucoup travaillé sur l'analyse de la filière café lao (une étude réalisée par l'Unité Centrale du PCADR a été récemment publiée et présentée ; elle devra servir de point de départ),
- l'assistant technique du PAB,

---

[1] PAB dans la suite du texte.
[2] Programme de Capitalisation en Appui à la Politique de Développement Rural.

- un agro-économiste lao (par exemple de l'Université de Nabong qui a organisé une formation sur l'analyse des filières en 2005),
- l'assistante/animatrice du GTC.

L'expert en analyse de filières interviendra au cours de 2 missions courtes programmées en janvier et fin avril 2007. Il aura comme objectif principal d'appuyer le groupe d'assistance technique de la commission n°2 pour la réalisation du diagnostic participatif.

## Références de la mission courte n° 1 (janvier 2007)

*Mission n°1* :

6. Réviser les analyses de la filière café lao déjà existante (La filière café sur le plateau des Bolovens, PDRPB, 1999, et Coffee value chain analysis, PCADR, 2005),
7. Mettre au point un protocole précis de diagnostic participatif de la filière café lao avec le groupe d'assistance technique,
8. Etablir un calendrier précis de l'étude (work plan),
9. Discuter la répartition des tâches,
10. Présenter avec le groupe d'assistance technique le protocole et le calendrier à la commission n°2 qui se réunira entre le 15 et le 19/01/2006.
11. Réaliser la mission au cours de 5 jours ouvrables au Laos (Vientiane) entre le 14 et le 21/01/2007
12. Rédiger un rapport synthétique à remettre à Lao Consulting Group avant le 15/02/2007 : version informatique (2 exemplaires) et papier (5 exemplaires). Ce rapport sera soit rédigé en anglais, soit rédigé en français et traduit en lao avant envoi.

## ເອກະສານຊ້ອນທ້າຍ 2: GTC - ກຸ່ມວິຊາການກາເຟ ຄະນະກຳມະການ ທີ 2

<u>ກ່ຽວກັບການສຶກສາການວິເຄາະຕ່ອງໂສ້ການສະໜອງກາເຟ</u>

- ທ່ານ ເກດແກ້ວ ພອງເພັດ
  ຫົວໜ້າພະແນກວິຊາການ, ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້
- ທ່ານ ບຸນສີ
  ຜູ້ຕາງໜ້າຜູ້ຜະລິດກາເຟ, ບ້ານຈັບສະຫວ່າງ, ແຂວງຈຳປາສັກ
- ທ່ານ ບຸນແລວ
  ຜູ້ຕາງໜ້າຜູ້ຜະລິດກາເຟ, ບ້ານໂພແຄມ, ແຂວງສາລະວັນ
- ທ່ານ ນ ເຫລື້ອງ ລິດດັງ
  ປະທານບໍລິສັດ ດາວເຮືອງຂາອອກ-ຂາເຂົ້າ, ປະທານສະມາຄົມກາເຟ
- ທ່ານ ທອງຄຳ ພັນທະໄລ
  ສະມາຊິກຄະນະຊີ້ນຳ, ສະມາຄົມກາເຟລາວ
- ທ່ານ ຄຳແສນ ອິນທາລາເພັດ
  ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ , ແຂວງສາລະວັນ
- ທ່ານ ຈັນສະໜອນ ສີສະອາດ
  ກົມສົ່ງເສີມຜະລິດຕະພັນ, ກະຊວງອຸດສະຫະກຳ ແລະ ການຄ້າ
- ທ່ານ ບຸນລຽບ ຈຸນທະວົງ
  ຫົວໜ້າໂຄງການຍ່ອຍບໍລະເວນ

## ເອກກະສານຊ້ອນທ້າຍ 3: ຕາຕະລາງການປະຕິບັດວຽກຂອງທີມງານ

14.01.2007 ຄະນະເດີນທາງຈາກ ມົງເປີລີເອີ (ປະເທດຝຣັ່ງເສດ)

15.01.2007 ທີມງານເດີນທາງມາເຖີງວຽງຈັນ(ສປປລາວ) - ພົບກັບກຸ່ມວິຊາການກາເຟ

16.01.2007 ທີ່ນະຄອນຫລວງວຽງຈັນ- ຫ້ອງການປະສານງານໂຄງການລົງທຶນໃນການສະຫນັບສະຫນູນ ນະໂຍບາຍ ເພື່ອການພັດທະນາຊົນນະບົດ- ກະຊວງກະສິກຳ ແລະ ປ່າໄມ້

9:00-12:00 ບົດສະເຫນີຂອງກຸ່ມວິຊາການ, ການທວນຄືນເອກກະສານທີ່ມີສຳລັບຕ່ອງໂສ້ກາເຟ; ບົດສະເຫນີຂອງຫ້ອງການປະສານງານກ່ງວກັບຜົນຂອງການວິເຄາະກ່ງວກັບຕ່ອງໂສ້ກາເຟ

14:00-16:00 ເປົ້າຫມາຍຂອງການມສ່ວນຮ່ວມ ຂອງກຸ່ມວິຊາການ ໃນການວິເຄາະຕ່ອງໂສ້ກາເຟ. ສະເຫນີວິທີການ. ການສຳຫລວດຊະນິດຂອງຜູ້ມີສ່ວນຮ່ວມ

17.01.2007 ນະຄອນຫລວງວຽງຈັນ - ຫ້ອງການປະສານງານໂຄງການ UC-PCADR , ກະຊວງກະສິກຳ ແລະ ປ່າໄມ້

9:00-12:00 ການສຳຫລວດຊະນິດຂອງຜູ້ມີສ່ວນຮ່ວມ(ສືບຕໍ່) ແຜນປະຕິບັດວຽກ

14:00-16:00 ແຜນປະຕິບັດວຽກ (ສືບຕໍ່)

18.01.2007 ນະຄອນຫລວງວຽງຈັນ - ຫ້ອງການປະສານງານໂຄງການ UC-PCADR , ກະຊວງກະສິກຳ ແລະ ປ່າໄມ້

9:00-12:00 ການຈັດຕັ້ງບັນດາກິດຈະກຳ, ຫນ້າທີ່ຂອງທີມງານ.

14:00-16:00 ບົດສະເຫນີຫຍໍ້ ກ່ງວກັບກອງປະຊຸມຄັ້ງທີ2 ສຳລັບກຸ່ມວິຊາການທີ່ (ພາສາລາວ ແລະ ອັງກິດ)

19.01.2007 ນະຄອນຫລວງວຽງຈັນ - ຫ້ອງການປະສານງານໂຄງການ UC-PCADR , ກະຊວງກະສິກຳ ແລະ ປ່າໄມ້

9:00 to 12:00 ສຳເລັດແຜນກິດຈະກຳ, ບົດສະເຫນີ ແລະ ອື່ນໆ.. ນະຄອນຫລວງວຽງຈັນ- ໂຮງແຮມເສດຖາປາລັສ

14:00-16:00 ກອງປະຊຸມຄັ້ງທີ 2 ຂອງກຸ່ມວິຊາການກາເຟ

20.01.2007 ນະຄອນຫລວງວຽງຈັນກອງປະຊຸມລາຍງານ ກັບໂຄງການຍ່ອຍບໍລະເວນ ແລະ ສະມາຄົມກາເຟລາວ

## ເອກະສານຊ້ອນທ້າຍ 4: *ກອງປະຊຸມກຸ່ມວິຊາການກາເຟຄັ້ງທີ 2*

ຕາຕະລາງ

ວັນທີ: 19ມັງກອນ 2007

ສະຖານທີ່: ໂຮງແຮມເສດຖາປາລັສ, ນະຄອນຫລວງວຽງຈັນ

| ເວລາ | ຫົວຂໍ້ | ຜູ້ຮັບຜິດຊອບ |
|---|---|---|
| 13:00 – 13:30 | **ລົງທະບຽນ** | ຫ້ອງການປະສານງານໂຄງການ UC-PCADR |
| 13:30 – 13:45 | **ພິທີເປີດ:**<br>• ບົດປາໃສຂອງ ທ່ານ ລັດຖະມົນຕີວ່າການ ກະຊວງສາທາລະນະສຸກ | <br>ທ່ານ ສີຕາເຮັ່ງ ລາຊະພົນ |
| 13:45 – 13:55 | ການຮັບຮອງເອົາວາລະກອງປະຊຸມຄັ້ງທີ 1 | ເລຂາກຸ່ມວິຊາການກາເຟ GTC. |
| 13:55 – 14:10 | ໜ້າວຽກທີ່ໄດ້ປະຕິບັດຫລັງຈາກກອງປະຊຸມຄັ້ງທີ 1 | ທ່ານ ອານິນ ຄຳຮຸ່ງ |
| 14:10 – 14:30 | ເອກະສານກ່ຽວກັບຄະນະກາເຟລະດັບໂລກ ຄະນະກຳມາທິການ 1. | ຜູ້ຊ່ວຍກຸ່ມວິຊາການກາເຟ |
| 14:30 – 14:45 | ການທວນຄືນພາລະບົດບາດຂອງນັກກົດໝາຍທີ່ຈະຊ່ວຍຄະນະກຳມະການ 1. | ທ່ານ ຄຳສອນ ສີສະຍຸດ |
| 14:45 – 15:00 | ການສົນທະນາກ່ຽວກັບຄະນະກຳມະການ 1. | ຜູ້ອຳນວຍຄວາມສະດວກ – ໂຄງການPCADR |
| 15:00 – 15:20 | ພັກຜ່ອນ | ໂຄງການPCADR |
| 15:20 – 16:00 | ການປະຕິບັດວຽກຂອງຊ່ຽວຊານວິເຄາະຕ່ອງໂສ້ການສະໜອງກາເຟ<br>ບົດສະເໜີກ່ຽວກັບແຜນວຽກຂອງຄະນະ 2.<br>ວາລະກອງປະຊຸມ.<br>ການສົນທະນາ. | ທ່ານ Denis Sautier, Cirad. |
| 16:00 – 16:20 | ການໄປທັດສະນະສຶກສາກ່ຽວກັບຄະນະຊີ້ນຳກາເຟ.<br>1. **ຈຸດປະສົງ, ໄລຍະເວລາ, ການເຫັນດີຂອງນັກສຳມະນາກອນ.**<br>2. **ກຳນົດເວລາ**<br>3. **ລາຍຊື່ສຳມະນາກອນທີ່ເປັນໄປໄດ້** | ກອງເລຂາກຸ່ມວິຊາການກາເຟ. |
| 16:20 – 16:40 | ການຕັດສິນກ່ຽວກັບກອງປະຊຸມຄັ້ງຕໍ່ໄປ(ເວລາ, ສະຖານທີ່ດກິດຈະກຳຂອງຄະນະກຳມະການ) | ຜູ້ອຳນວຍຄວາມສະດວກ-PCADR |
| 16:40 – 17:00 | **ສະຫລຸບສັງລວມ ແລະ ປິດກອງປະຊຸມ:**<br>• ສັງລວມໂດຍທ່ານ ປະທານກຸ່ມວິຊາການກາເຟ | <br>ທ່ານ ອານິນ ຄຳຮຸ່ງ |

PCADR = ໂຄງການພັດທະນາຊົນນະບົດຮອບດ້ານ ຮ່ວມມື ລາວ-ຝຣັ່ງເສດ

UC = ຫ້ອງການປະສານງານສູນກາງໂຄງການ PCADR

Cirad = ສູນຮ່ວມມືສາກົນໃນການວິໃຈທາງດ້ານກະສິກຳເພື່ອການພັດທະນາ

.

## ເອກະສານຊ້ອນທ້າຍ 5: ບົດສະເໜີໃນກອງປະຊຸມຄັ້ງທີ 2 ຂອງກຸ່ມວິຊາການກາເຟ

ໂຮງແຮມເສດຖາ ປາລັສ, ນະຄອນຫລວງວຽງຈັນ ວັນທີ **17.01.2007**

**ສະໄລ ທີ 1**

**ການວິເຄາະຮ່ວມກ່ຽວກັບຕ່ອງໂສ້ການສະໜອງກາເຟ**

**ຂໍ້ສະເໜີຈາກກຸ່ມວິຊາການກາເຟ**

**ໃນກອງປະຊຸມຄັ້ງທີ 2**

**ວັນທີ 19 ມັງກອນ 2007**

**ສະໄລ ທີ 2**

**ຈຸດປະສົງຂອງຄະນະກຳມະການທີ 2**

- **ເພື່ອຊີ້ນຳການສຶກສາຮ່ວມໃນການວິເຄາະຕ່ອງໂສ້ການສະໜອງກາເຟ**
- **ການວິເຄາະແມ່ນເພື່ອເປັນພື້ນຖານໃຫ້ແກ່ການສ້າງລາຍລະອຽດຂອງນະໂຍບາຍແຫ່ງຊາດ ສຳລັບການພັດທະນາຕ່ອງໂສ້ຄຸນຄ່າຂອງກາເຟລາວ%**
    - **ໃນໄລຍະສັ້ນ**
    - **ກາງ**
    - **ແລະໄລຍະຍາວ**

**ສະໄລ 3**

**ສະມາຊິກຂອງຄະນະກຳມະການ ທີ 2**

- ທ່ານ ເກດແກ້ວ ພວງເພັດ
  ຫົວໜ້າພະແນກວິຊາການ, ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້

- ທ່ານ ບຸນສີ
  ຜູ້ຕາງໜ້າຜູ້ຜະລິດກາເຟ, ບ້ານຈັນສະຫວ່າງ, ແຂວງຈຳປາສັກ

- ທ່ານ ບຸນແລວ
  ຜູ້ຕາງໜ້າຜູ້ຜະລິດກາເຟ, ບ້ານໂພແຄມ, ແຂວງສາລະວັນ

- ທ່ານ ນ ເຫລື້ອງ ລິດດັງ
  ປະທານບໍລິສັດ ດາວເຮືອງຂາອອກ-ຂາເຂົ້າ, ປະທານສະມາຄົມກາເຟ

- ທ່ານ ທອງຄຳ ພັນທະໄລ
  ສະມາຊິກຄະນະຊີ້ນຳ, ສະມາຄົມກາເຟລາວ
- ທ່ານ ຄຳແສນ ອິນທາລາເພັດ
  ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ , ແຂວງສາລະວັນ
- ທ່ານ ຈັນສະໝອນ ສີສະອາດ
  ກົມສົ່ງເສີມຜະລິດຕະພັນ, ກະຊວງອຸດສະຫະກຳ ແລະ ການຄ້າ

- ທ່ານ ບຸນລຽບ ຈຸນທະວົງ

  ຫົວໜ້າໂຄງການຍ່ອຍບໍລະເວນ

**ສະໄລທີ 4**

**ການວິເຄາະຮ່ວມກັນ**

- ເປັນຫຍັງຈຶ່ງຕ້ອງມີການວິເຄາະຮ່ວມກັນ?
  - o ເພື່ອສ້າງຄວາມເຂົ້າໃຈທີ່ເປັນເອກກະພາບກັນ ໃນບັນດາຝ່າຍລັດຖະບານ, ຜູ້ຜະລິດ, ຜູ້ຂົ້ວກາເຟ, ພໍ່ຄ້າ ແລະ ຜູ້ສົ່ງອອກ
    - ກົນໄກໃນປະຈຸບັນ
- ແລະ ສ້າງເປົ້າໝາຍອັນດຽວກັນ ສໍາລັບ:
  - ຈຸດດີ ແລະ ຈຸດຄົງຄ້າງ
  - ບ່ອນທີ່ຕ້ອງປັບປຸງ
- ຂະບວນການ AS ແມ່ນມີຄວາມສໍາຄັນໃນການເກັບກໍາຂໍ້ມູນ ແລະ ວິເຄາະ

.....ຍ້ອນວ່າ ເປົ້າໝາຍແມ່ນເພື່ອສ້າງພື້ນຖານສໍາລັບອົງການສະມາຄົມກາເຟລາວແຫ່ງຊາດ

**ສະໄລ ທີ 5**

## ການວິເຄາະຮ່ວມ

## ແມ່ນຫຍັງແມ່ນການສຶກສາຮ່ວມກັນ?

- ແມ່ນການສົນທະນາບັນຫາ ແລະ ຂໍ້ແກ້ໄຂ ໂດຍສະມາຊິກທຸກໆຄົນ
- ແມ່ນການສຶກສາໂດຍການມີສ່ວນຮ່ວມ ໃນການເກັບກໍາຂໍ້ມູນ ແລະ ການວິໃຈຂໍ້ມູນ ຂອງສະມາຊິກທຸກຄົນ
- ແມ່ນການຕົກລົງເຫັນດີ ກ່ຽວກັບຂໍ້ສະຫລຸບຂອງທຸກຄົນ
- ແມ່ນຂະບວນການທີ່ທຸກຄົນເທົ່າທຽມກັນ
- ແມ່ນການເຮັດວຽກເປັນກຸ່ມ: ສະມາຊິກກຸ່ມວິຊາການທຸກຄົນຕ້ອງໄດ້ເອົາແນວຄວາມຄິດ ແລະ ວຽກງານໃນແຕ່ລະຂັ້ນຕອນຂອງການສຶກສາ

**ສະໄລ ທີ 6**

## ທີມງານສະໜັບສະໜູນດ້ານວິຊາການ

- **ແມ່ນເພື່ອສະໜັບສະໜູນຄະນະກໍາມະການທີ 2 , ກຸ່ມສະໜັບສະໜູນທາງດ້ານວິຊາການແມ່ນໄດ້ສ້າງຂຶ້ນມາເພື່ອ:**
  - ຜູ້ຊ່ວຍທາງດ້ານວິຊາການ ຂອງຫ້ອງການປະສານງານໂຄງການໃນລະດັບສູນກາງ, ທ່ານ ສະເຕເວັນ ເຊັບປະເລ
  - ນຶ່ງທ່ານ ຈາກຫ້ອງການປະສານງານໂຄງການ, ທ່ານ ເພັດທະນູສອນ ເທມີນສິດທິດາ
  - ຜູ້ຊ່ວຍກຸ່ມວິຊາການ: ທ່ານ ນ ພອນປະເສີດ ມະຫາວົງ
  - ຜູ້ຊ່ວຍທາງດ້ານວິຊາການ ຂອງໂຄງການຍ່ອຍບໍລະເວນ:, ທ່ານ ເບຕອງ ຊາເລ

- ສະໜັບສະໜູນໂດຍ ຊ່ຽວຊານຕ່ອງໂສ້ອາຫານ: ທ່ານ ເດນີສ ໄຊຕີເອີ

ສະໄລ ທີ 7

## ການວິເຄາະ

## ກ່ຽວກັບຕ່ອງໂສ້ການສະໜອງອາຫານທີ່ມາຈາກກະສິກຳ

ຮອບວຽນຂອງອາຫານ: ແມ່ນຕ່ອງໂສ້

ຖ້າຫາກວ່າການເຊື່ອມຕໍ່ແມ່ນອ່ອນແອ, ທັງໝົດຂອງຕ່ອງໂສ້ຈະອ່ອນແອ

ຕ້ອງມີຄວາມເຂົ້າໃຈກັບສິ່ງທີ່ກ່ຽວຂ້ອງ. ຕົວຢ່າງ:

ສະໄລ ທີ 8



ສະໄລ ທີ 9

ບັນດາຄໍານິຍາມ

- <u>ຕ່ອງໂສ້ການສະໜອງ:</u>
    - o " ແມ່ນທັງໝົດຂອງບັນດາຜູ້ທີ່ຮ່ວມໃນເສດຖະກິດ ແລະ ການພົວພັນຂອງພວກເຂົາ ທີ່ໄດ້ມີສ່ວນຮ່ວມໃນການປູກ, ການຜະລິດ(ແປຮູບ), ການຈໍາໜ່າຍ ແລະ ການບໍລິໂພກ ຜະລິດຕະພັນ"
    - o ມັນໄດ້ມີການກໍານົດ ແສງສະຫວ່າງໃຫ້ແກ່ນັກເສດຖະກິດ ແລະ ການປະຕິບັດທາງດ້ານການຄ້າ, ການສ້າງລາຄາ, ຍຸດທະສາດໃນການປັບປຸງການເຂົ້າເຖິງຕະຫລາດ.

ສະໄລ ທີ 10

**≺≺ 5 ຂັ້ນຕອນທີ່ສໍາຄັນ≻≻**

**ສໍາລັບການສຶກສາຮ່ວມໃນຕ່ອງໂສ້ການສະໜອງກາເຟ**

---

- ຂັ້ນຕອນ ທີ່ 1: ການວິເຄາະໃນລະດັບຊາດ
- ຂັ້ນຕອນທີ 2: ເຊື່ອມຕໍ່ກັບຕະຫລາດສາກົນ
- ຂັ້ນຕອນທີ 3: ໂຄງສ້າງຂອງຕ່ອງໂສ້
- ຂັ້ນຕອນທີ 4: ການປະຕິບັດການຂອງຕ່ອງໂສ້
- ຂັ້ນຕອນທີ່ 5: ການອະທິບາຍຜົນ ໄດ້ຮັບ

---

ສະໄລ ທີ 11 1 - ການວິເຄາະໃນລະດັບຊາດ

---

- ຈຸດປະສົງ:
    - o ເພື່ອເຂົ້າໃຈເຖິງການເຄື່ອນໄຫວຂອງການຕະຫລາດພາຍໃນປະເທດ ແລະ ການບໍລິໂພກ
- ການເກັບກໍາຂໍ້ມູນ:
    - o ຜູ້ຊື້ກາເຟ
    - o ຜູ້ຂາຍກາເຟ
    - o ຜູ້ບໍລິໂພກ

o ຂໍ້ກຳນົດກົດລະບຽບພາຍໃນປະເທດ

ສະໄລ ທີ 12

## 2 - ການເຊື່ອມຕໍ່ກັບຕະຫລາດສາກົນ

- ຈຸດປະສົງ:
  - o ເພື່ອເຂົ້າໃຈເຖິງ ຂໍ້ຈຳກັດ ແລະ ທ່າແຮງຂອງກາເຟລາວໃນຕະຫລາດສາກົນ
- ການເກັບກຳຂໍ້ມູນ:
  - o ສະຖິຕິການສົ່ງອອກ
  - o ການສຳຫລວດຂອງຜູ້ນຳເຂົ້າ
  - o ຜູ້ບໍລິໂພກ
  - o ຂໍ້ກຳນົດກົດລະບຽບ, ຂັ້ນຕອນ, ລາຄາ.. ໃນການສົ່ງອອກ
  - o ການປັບປຸງໃນອະນາຄົດ:
    - ມາດຕະຖານ, ອົງການການຄ້າໂລກ, ການເຄື່ອນໄຫວຂອງຕະຫລາດໂລກ, ໂຄງສ້າງ..

ສະໄລ ທີ 13

## 3 - ໂຄງສ້າງຂອງຕ່ອງໂສ້

- ຈຸດປະສົງ:
  - o ເພື່ອເຂົ້າໃຈກ່ຽວກັບຕ່ອງໂສ້ ແຕ່ລະຂັ້ນຕອນ
- ການເກັບກຳຂໍ້ມູນ:
  - o ຜູ້ທີ່ມີສ່ວນຮ່ວມ ຜູ້ຜະລິດ
  - o ຜູ້ຜະລິດ ຜູ້ຂົນສົ່ງແລະຜູ້ເກັບຊື້
  - o ຜູ້ສົ່ງອອກ
  - o ການປະຕິບັດການນອກຊາຍແດນ ແລະ ຜູ້ຊື້
    - ສ ສ ຫວຽດນາມ
    - ລາຊະອານາຈັກໄທ
    - ຢູໂລບ ແລະ ອື່ນໆ

ສະໄລ ທີ 14

## 4 - ການປະຕິບັດການຂອງຕ່ອງໂສ້

- ການອອກແບບແຜນທີ່ຂອງຕ່ອງໂສ້:
  - ການໝູນວຽນຂອງຜະລິດຕະພັນ
  - ລາຄາ
  - ການໝູນວຽນຂອງເງິນ
  - ການໝູນວຽນຂອງຂໍ້ມູນ

ສະໄລ ທີ 15

## 5 - ການອະທິບາຍຜົນໄດ້ຮັບ

- ແຫລ່ງຂອງການປັບປຸງ?
- ຈຸດດີ?
- ຈຸດອ່ອນ?
- ທ່າແຮງໃນການເພີ້ມມູນຄ່າ?
- ການຄາດຄະເນສິ່ງທີເປັນໄປໄດ້ໃນການປ່ຽນແປງ?

ສະໄລ ທີ 16

## ສະຫລຸບສັງລວມ

- ເລີ້ມແຕ່ຂັ້ນຕອນທີ ນຶ່ງ
- ການວິເຄາະຕະຫລາດແຫ່ງຊາດ
- ໂດຍການມີສ່ວນຮ່ວມຂອງ
  - ຜູ້ຊື້ກາເຟ
  - ກະຊວງການຄ້າ, ສະພາການຄ້າ, ອົງການວິທະຍາສາດ ແລະ ແຂວງ
  - ຈະຕ້ອງໄດ້ພົວພັນກັບກຸ່ມວຽຊາການ